Implemented by giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

german cooperation DEUTSCHE ZUSAMMENARBEIT

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

# ຮັບປະກັນສິດການຄອບຄອງນຳໃຊ້ທີ່ດິນປ່າໄມ້ ຢູ່ສປປ ລາວ

## ໂຄງການຄຸ້ມຄອງທີ່ດິນ ແລະ ການວາງແຜນແບບມີສ່ວນຮ່ວມ ໄລະ 4 (LMDP 4)

| ຊື່ໂຄງການ | ໂຄງການຄຸ້ມຄອງທີ່ດິນ ແລະ ການວາງແຜນແບບມີສ່ວນຮ່ວມ ໄລະ 4 (LMDP 4) |
|---|---|
| ໃຫ້ທຶນໂດຍ | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາຂອງສະຫະພັນເຢຍລະມັນ) BMZ) ແລະ ອົງການເພື່ອການພັດທະນາ ແລະ ການຮ່ ວມມື ສະວິ ດເຊີ ແລນ (SDC). |
| ເຂດເປົ້າໝາຍໂຄງການ | ໄຊຍະບູລີ, ຫົວພັນ (ຂັ້ນແຂວງ) ແລະ ນະຄອນຫຼວງວຽງຈັນ (ຂັ້ນສູນກາງ) |
| ຄູ່ຮ່ວມງານຈັດຕັ້ງປະຕິບັດໂຄງການ | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (MoNRE), ກະຊວງກະສິກຳ ແລະ ປ່າໄມ້ (MAF), ແລະ ກະຊວງແຜນການ ແລະ ການລົງທຶນ (MPI) |
| ໄລຍະເວລາ | ມັງກອນ 2025 – ທັນວາ 2027 |

### ພາບລວມ

ສປປ ລາວ ກຳລັງພົບກັບຄວາມທ້າທາຍກ່ຽວກັບສິດຕໍ່ທີ່ດິນ ແລະ ປ່າໄມ້. ໃນປະຈຸບັນ, ຊຸມຊົນໃນເຂດຊົນນະບົດຫຼາຍກວ່າ 3,000 ແຫ່ງ ແມ່ນອາໄສຢູ່ໃນທີ່ດິນປ່າໄມ້ໂດຍບໍ່ມີເອກະສານຢັ້ງຢືນສິດການນຳໃຊ້ທີ່ດິນ. ການຮັບຮູ້ສິດທີ່ດິນໃນຂອບເຂດຈຳກັດໄດ້ສົ່ງຜົນເຮັດໃຫ້ມີການຈັບຈ່ອງດິນ, ຂໍ້ຂັດແຍ່ງ, ບຸກລຸກນຳໃຊ້ຊັບພະຍາກອນທຳມະຊາດ. ນອກຈາກນັ້ນ, ການຄຸ້ມຄອງສິດທີ່ນຳໃຊ້ທີ່ດິນທີ່ບໍ່ເປັນລະບົບຄົບຊຸດ ເຮັດໃຫ້ການຄຸ້ມຄອງປ່າໄມ້ບໍ່ມີປະສິດທິຜົນ, ການຕັດໄມ້ທຳລາຍປ່າ, ຜົນກະທົບຕໍ່ຊີວະນາໆພັນ ແລະ ການດຳລົງຊີວິດທຳມາຫາກິນຂອງປະຊາຊົນ.

ເພື່ອເປັນການແກ້ໄຂບັນຫາດັ່ງກ່າວ, ເລີ່ມແຕ່ປີ 2015 ຫາ 2024, ໂຄງການຄຸ້ມຄອງທີ່ດິນ ແລະ ການວາງແຜນແບບມີສ່ວນຮ່ວມ (LMDP) ໄດ້ເຮັດວຽກຮ່ວມກັບລັດຖະບານ ແລະ ຄູ່ຮ່ວມພັດທະນາອື່ນໆ, ເພື່ອເສີມຂະຫຍາຍການຈັດການ ແລະ ຄຸ້ມຄອງທີ່ດິນໃນ ສປປ ລາວ. ເລີ່ມແຕ່ປີ 2025, ໄລຍະໂຄງການປະຈຸບັນແມ່ນສຸມໃສ່ການຮັບປະກັນສິດໃນການຄອບຄອງນຳໃຊ້ທີ່ດິນຂອງປະຊາຊົນ ແລະ ຜູ້ຊົມໃຊ້ປ່າໄມ້, ພ້ອມດຽວກັນກັບການປົກປັກຮັກສາປ່າໄມ້ ແລະ ຊີວະນາໆພັນ. ເພື່ອບັນລຸເປົ້າໝາຍເຫຼົ່ານີ້ໄດ້ໂດຍຜ່ານຂະບວນການຄຸ້ມຄອງທີ່ດິນແບບປະສົມປະສານທີ່ປົກປ້ອງສິດຂອງປະຊາຊົນຕໍ່ການນຳໃຊ້ທີ່ດິນຕະຫຼອດເຖິງການປົກປັກຮັກສາສິ່ງແວດລ້ອມ. ໃນຂະນະດຽວກັນ, ໂຄງການຍັງແນ່ໃສ່ການປັບປຸງນິຕິກຳກ່ຽວກັບສິດໃນການຄອບຄອງນຳໃຊ້ທີ່ດິນ ແລະ ເສີມຂະຫຍາຍຂະບວນການຕັດສິນວຽກງານຄຸ້ມຄອງທີ່ດິນ ແລະ ປ່າໄມ້ຜ່ານການນຳໃຊ້ລະບົບຂໍ້ມູນຂ່າວສານທີ່ດິນແບບທັນສະໄໝ.

### ເປົ້າໝາຍ

ໂຄງການດັ່ງກ່າວມີຈຸດປະສົງເພື່ອຮັບປະກັນສິດໃນການຄອບຄອງນຳໃຊ້ທີ່ດິນຂອງປະຊາຊົນ ແລະ ຜູ້ຊົມໃຊ້ປ່າໄມ້, ໃນຂະນະດຽວກັນກັບການປົກປັກຮັກສາປ່າໄມ້ ແລະ ຊີວະນາໆພັນໂດຍຜ່ານຂະບວນການຄຸ້ມຄອງທີ່ດິນແບບປະສົມປະສານ, ປັບປຸງນິຕິກຳ, ແລະ ພັດທະນາລະບົບຂໍ້ມູນຂ່າວສານແບບທັນສະໄໝ.

### ວິທີການດຳເນີນງານ

- **ຊຸກຍູ້ຈັດຕັ້ງປະຕິບັດການຄຸ້ມຄອງທີ່ດິນແບບປະສົມປະສານ:** ສຸມໃສ່ການສະໜັບສະໜູນປົກປ້ອງສິດທີ່ດິນ, ປ່າໄມ້, ແລະ ຊີວະນາໆພັນ ຢູ່ແຂວງ ໄຊຍະບູລີ ແລະ ແຂວງຫົວພັນ, ພ້ອມທັງສົ່ງເສີມໃຫ້ປະຊາຊົນ ແລະ ເຈົ້າຫນ້າທີ່ທາງພາກລັດມີຄວາມຮັບຜິດຊອບຕໍ່ການນຳໃຊ້ທີ່ດິນຫລາຍຂຶ້ນ.
- **ປັບປຸງນິຕິກຳກ່ຽວກັບສິດໃນການຄອບຄອງນຳໃຊ້ທີ່ດິນໃນທີ່ດິນປ່າໄມ້:** ໃຫ້ຄວາມສຳຄັນຕໍ່ສິດທີ່ດິນຂອງແມ່ຍິງ ແລະ ການມີສ່ວນຮ່ວມຂອງອົງການຈັດຕັ້ງສັງຄົມ, ໂດຍຜ່ານກອງປະຊຸມປຶກສາຫາລື ແລະ ການປະສານງານຫຼາຍພາກສ່ວນ.
- **ຍົກລະດັບລະບົບການຄຸ້ມຄອງຂໍ້ມູນຂ່າວສານທີ່ດິນແບບທັນສະໄຫມ:** ປັບປຸງເຄື່ອງມືຕ່າງໆເຊັ່ນ: ລະບົບຂໍ້ມູນການນຳໃຊ້ທີ່ດິນ (LUIS) ແລະ ລະບົບຖານຂໍ້ມູນທະບຽນທີ່ດິນ (LaoLandReg), ສົ່ງເສີມການນຳໃຊ້ຂໍ້ມູນຢ່າງມີປະສິດທິພາບ ເຂົ້າໃນຂະບວນການຕັດສິນໃຈກ່ຽວກັບວຽກງານຄຸ້ມຄອງທີ່ດິນ ແລະ ປ່າໄມ້.

### ຜົນໄດ້ຮັບ

ເລີ່ມແຕ່ໄລຍະທຳອິດ ຫາ ໄລຍະທີ 3 ຂອງການຈັດຕັ້ງປະຕິບັດໂຄງການ, ໂຄງການໄດ້ບັນລຸບັນດາຜົນສຳເລັດດັ່ງລຸ່ມນີ້:

- ໂດຍໄດ້ຮັບການສະໜັບສະໜູນຈາກໂຄງການ LMDP ແລະ ຄູ່ຮ່ວມພັດທະນາອື່ນໆ, ໃນປີ 2024 ສະພາແຫ່ງຊາດໄດ້ຮັບຮອງເອົາມະຕິວ່າດ້ວຍການຮັບຮູ້ສິດທີ່ດິນໃນເຂດທີ່ດິນປ່າໄມ້ຢ່າງເປັນທາງການ. ການຮັບຮອງດັ່ງກ່າວຊ່ວຍຮັບປະກັນສິດຕໍ່ທີ່



*ໄຮ່ນາ ແລະ ທົ່ງນາ ເປັນສ່ວນຫນຶ່ງໃນການວາງແຜນການນຳໃຊ້ທີ່ດິນໃນແຂວງຫົວພັນ, ສປປ ລາວ. ©GIZ/Bart Verweij*

ດິນໃຫ້ແກ່ຄອບຄົວຫຼາຍກວ່າ 227,000 ຄອບຄົວທີ່ອາໄສຢູ່ໃນຂົງເຂດດັ່ງກ່າວ.

- ນັບແຕ່ປີ 2015, ທີ່ດິນຈໍານວນ 27,317 ຕອນ ໄດ້ຮັບການຂຶ້ນທະບຽນ, ແລະ ໄດ້ມີການອອກໃບຕາດິນ 22,923 ສະບັບ. ໃນນີ້, 70% ຂອງດິນສ່ວນບຸກຄົນ ແມ່ນອອກເປັນຊັບເດີມຂອງແມ່ຍິງ ຫຼື ເປັນສິນສົມສ້າງ. ນອກຈາກນີ້, ໃນເດືອນ ທັນວາ 2024 ທີ່ຜ່ານມາ, ໄດ້ມີການອອກໃບຕາດິນໃຫ້ແກ່ປະຊາຊົນທີ່ອາໄສຢູ່ ໃນເຂດປ່າໄມ້ຢູ່ແຂວງຫົວພັນ, ເຊິ່ງເປັນຄັ້ງທໍາອິດໃນປະຫວັດສາດຂອງ ສປປ ລາວ.
- ໂຄງການ LMDP ໄດ້ມີການຈັດຕັ້ງປະຕິບັດການວາງແຜນນໍາໃຊ້ທີ່ດິນແບບມີ ສ່ວນຮ່ວມຢູ່ໃນ 102 ຊຸມຊົນ. ໃນຂະບວນການດັ່ງກ່າວ, ປະຊາຊົນຫຼາຍກວ່າ 78,000 ໄດ້ມີສ່ວນຮ່ວມ ແລະ ໄດ້ຮັບການຝຶກອົບຮົມກ່ຽວກັບການວາງແຜນ ແລະ ນໍາໃຊ້ທີ່ດິນຢ່າງຍືນຍົງໃນຊຸມຊົນ.
- ສໍາເລັດໃນການພັດທະນາລະບົບຖານຂໍ້ມູນທະບຽນທີ່ດິນແບບດິຈິຕອນ, LaoLandReg, ເຊິ່ງໄດ້ຮັບຮອງຈາກລັດຖະບານ ສປປ ລາວໃຫ້ເປັນຖານຂໍ້ ມູນຖະບຽນທີ່ດິນຢ່າງເປັນທາງການ. ລະບົບດັ່ງກ່າວໄດ້ຖືກນໍາໃຊ້ໃນຂອບເຂດ ທົ່ວປະເທດ ແລະ ໄດ້ສືບຕໍ່ໃນການຜັນຂະຫຍາຍໂດຍການສະໜັບສະໜູນຈາກ ທະນາຄານໂລກ ແລະ ທະນາຄານພັດທະນາເຢຍລະມັນ KfW ໃນການ ພັດທະນາຕໍ່ຍອດລະບົບເພື່ອເສີມຂະຫຍາຍຂະບວນການຄຸ້ມຄອງທີ່ດິນໃນທົ່ວ ປະເທດ.
- ໃນປີ 2024, ລະບົບຂໍ້ມູນການນໍາໃຊ້ທີ່ດິນ (LUIS) ໄດ້ຖືກຮັບຮອງຢ່າງເປັນ ທາງການເພື່ອໃຫ້ເປັນຖານຂໍ້ມູນແຫ່ງຊາດໃນການວາງແຜນການນໍາໃຊ້ທີ່ດິນໃນ ສປປ ລາວ. ລະບົບດັ່ງກ່າວປະກອບມີແຜນການນໍາໃຊ້ທີ່ດິນຂອງທຸກແຂວງ ແລະ ຫຼາຍກວ່າ 850 ຊຸມຊົນ, ເຊິ່ງສາມາດສະໜອງຂໍ້ມູນໃນການການຄຸ້ມຄອງ ທີ່ດິນໃຫ້ມີ ລັກສະນະຍືນຍົງ.
- ນັບແຕ່ປີ 2020 ເປັນຕົ້ນມາ, ມີພະນັກງານລັດທັງໝົດ 476 ຄົນ, ຍິງ 65 ຄົນ, ໄດ້ ຮັບການຝຶກອົບຮົມກ່ຽວກັບຂັ້ນຕອນ ແລະ ເຄື່ອງມືຕ່າງໆໃນການຄຸ້ມຄອງທີ່ດິນ. ເພື່ອສືບຕໍ່ສິ່ງເສີມວຽກງານດັ່ງກ່າວ, ໂຄງການຍັງໄດ້ຝຶກອົບຮົມໃຫ້ຄູຝຶກ 89 ທ່ານ, ເຊິ່ງປະຈຸບັນນີ້ເຮັດໜ້າທີ່ເປັນຄູຝຶກ ແລະ ແບ່ງປັນຄວາມຮູ້ໃຫ້ກັບຜູ້ອື່ນ.

## ບົດບາດຍິງ-ຊາຍ ແລະ ການຄຸ້ມຄອງທີ່ດິນ

ໃນເຂດຊົນນະບົດໃນ ສປປ ລາວ, ໂດຍສະເພາະແມ່ຍິງ, ແມ່ນພົບກັບຄວາມຫຍຸ້ງຍາກ ແລະ ເສຍໂອກາດໃນການໃຊ້ສິດໃນການເຂົ້າເຖິງທີ່ດິນ ແລະ ປ່າໄມ້.

ໃນໄລຍະທີ່ຜ່ານມາໃນການຈັດຕັ້ງປະຕິບັດ, ໂຄງການ LMDP ໄດ້ຮ່ວມມືກັບຄູ່ຮ່ວມງານ ພາກລັດໃນການສ້າງເຄື່ອງມືຫຼາຍຢ່າງ ເພື່ອນໍາໃຊ້ເຂົ້າໃນການປັບປຸງວຽກງານການວາງແຜນ ນໍາໃຊ້ທີ່ດິນ ແລະ ການບໍລິຫານລັດກ່ຽວກັບທີ່ດິນໃນສປປ ລາວ. ໃນໄລຍະການທົດລອງ ແລະ ຈັດຕັ້ງປະຕິບັດໃນບັນດາແຂວງເປົ້າໝາຍ, ໂຄງການໄດ້ໃຫ້ຊຸມຊົນວມີສ່ວນຮ່ວມ, ປະກອບດ້ວຍແມ່ຍິງ ແລະ ບັນດາຊົນເຜົ່າ ໃນທຸກວຽກງານຂອງໂຄງການ, ເລີ່ມແຕ່ການ ວາງແຜນ ຈົນເຖິງ ຂະບວນການຕັດສິນໃຈ.

ໃນໄລຍະໂຄງການນີ້, ໂຄງການໄດ້ໃຫ້ບຸລິມະສິດການເຂົ້າເຖິງສິດການນໍາໃຊ້ດິນຢ່າງເທົ່າ ທຽມ ແລະ ໄດ້ໃຫ້ຜົນປະໂຫຍດກັບທຸກພາກສ່ວນໃນທຸກຂັ້ນຕອນຂອງການຈັດຕັ້ງ ປະຕິບັດ, ເພື່ອຮັບປະກັນວ່າທຸກຄົນໄດ້ມີສ່ວນຮ່ວມ, ບໍ່ວ່າເພດ ຫຼື ຊົນເຜົ່າໃດກໍ່ຕາມ. ນອກຈາກນີ້, ຫົວຂໍ້ບົດບາດຍິງຊາຍໄດ້ຖືກເຊື່ອມສານເຂົ້າໃນທຸກກິດຈະກໍາຂອງໂຄງການ, ລວມທັງການວາງແຜນຄຸ້ມຄອງທີ່ດິນໃນຊຸມຊົນ, ກອງປະຊຸມປຶກສາຫາລືຫຼາຍພາກສ່ວນ, ວຽກງານຂອດປະສານງານຂອງຂະແໜງການຕ່າງໆ, ແລະ ການຝຶກອົບຮົມກ່ຽວກັບລະບົບ ຂໍ້ມູນການນໍາໃຊ້ທີ່ດິນ. ວຽກງານດັ່ງກ່າວແມ່ນສອດຄ່ອງກັບຫຼັກການທີ່ເອີ້ນວ່າ "ບໍ່ປະຖິ້ມ ໃຜໄວ້ທາງຫຼັງ" ໃນແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ເຊິ່ງແນ່ໃສ່ໃນການ ສ້າງຄວາມເຂັ້ມແຂງໃຫ້ແກ່ພາກລັດ ແລະ ຄູ່ຮ່ວມງານຢ່າງເປັນລະບົບ ເພື່ອປູກຈິດສໍານຶກ ແລະ ນໍາເອົາບົດບາດຍິງຊາຍເຂົ້າໃນວຽກງານການຄຸ້ມຄອງທີ່ດິນ ແລະ ປ່າໄມ້.



ແມ່ຍິງເຜົ່າກຶມມຸຖືໃບຕາດິນຢ່າງພາກພູມໃຈຫຼັງຈາກໄດ້ຮັບໃບຕາດິນມາຄອບຄອງສໍາເລັດ. ©GIZ/Bart Verweij

### ກ່ຽວກັບ GIZ Laos

GIZ, ໃນນາມເປັນສ່ວນໜຶ່ງຂອງການຮ່ວມມື ເຢຍລະມັນເພື່ອການພັດທະນາ, ໄດ້ເຄື່ອນໄຫວວຽກງານຢູ່ ສປປ ລາວ ແຕ່ປີ 1993 ຕາງໜ້າໃຫ້ກະຊວງການຮ່ວມ ມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງສະຫະພັນເຢຍລະມັນ (BMZ) ພ້ອມກັບບັນດາຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາ. ໃນປັດຈຸບັນ, GIZ ກໍາລັງສະ ໜັບສະໜູນບັນດາໂຄງການຢູ່ໃນ 3 ຂົງເຂດບູລິມະສິດ: ກ) ການພັດທະນາ ຊົນນະບົດ, ຂ) ການອະນຸລັກຮັກສາທໍາມະຊາດ ແລະ ຊັບພະຍາກອນທໍາມະຊາດ, ຄ) ການພັດທະນາເສດຖະກິດແບບຍືນຍົງ, ແລະ ງ) ວຽກງານການປົກຄອງທີ່ດີ.

ສໍາລັບຂໍ້ມູນເພີ່ມຕື່ມ, ກະລຸນາເຂົ້າເບິ່ງທີ່ເວັບໄຊ www.giz.de/laos


จัดพิมโดย: Deutsche Gesellschaft für Internationale Zusammenarbeit (GIZ) GmbH

ສໍານັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ

ໂຄງການຄຸ້ມຄອງທີ່ດິນ ແລະ ການວາງແຜນແບບມີສ່ວນຮ່ວມ (LMDP 4)

ເຮືອນເລກທີ 179, ໜ່ວຍ 14, ບ້ານບໍ້ ສີຖານເໜືອ, ເມືອງສີໂຄດຕະບອງ,
ນະຄອນຫຼວງວຽງຈັນ, ສປປປ ລາວ
T: +856 21 316 570

www.giz.de/laos (EN); www.giz.de/laos-la (LA)

ລົງວັນທີ: ເດືອນພຶດສະພາ 2025
ອອກແບບໂດຍ: ພະແນກການສື່ສານ, ຫ້ອງການGIZ, ນະຄອນຫຼວງວຽງຈັນ

ຮູບພາບໂດຍ: GIZ/CEGGA; GIZ/Bart Verweij
ເນື້ອຫາ: ທ່ານນາງ ປອ ແອນເນດຕ໌ ຊຣາມ

ຕິດຕໍ່: ທ່ານນາງ ປອ ແອນເນດຕ໌ ຊຣາມ (Annette.schramn@giz.de)

ຫ້ອງການ GIZ ຈະເປັນຜູ້ຮັບຜິດຊອບຕໍ່ເນື້ອໃນສິ່ງພິມດັ່ງກ່າວ.

ຕາງໜ້າໃຫ້: ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາຂອງ ສະຫະພັນ ເຢຍລະມັນ

ໂຄງການນີ້ໄດ້ຮັບທຶນຊ່ວຍເຫລືອຈາກ ກະຊວງການຮ່ວມມືດ້ານ ເສດຖະກິດ ແລະ ການ ພັດທະນາຂອງສະຫະພັນ ເຢຍລະມັນ (BMZ) ແລະ ອົງການເພື່ອການພັດທະນາ ແລະ ການ ຮ່ວມມື ສະວິດເຊີແລນ (SDC).